# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 14 ກຸມພາ 2021 (02-14-2021)

---

## ບຳລຸງຮັກສາຈົດຈໍ່ໃຈໃສ່ພຣະເຈົ້າ.

ທ່ານຈະຈັດການກັບສິ່ງລົບກວນຢ່າງໃດໃນເມື່ອທ່ານຕ້ອງຈົດຈໍ່ແທ້ໆໃສ່ພຣະເຈົ້າ?

**ຈຸດສຳຄັນໃນບົດຮຽນ:** ການຖືສິນອົດອາຫານແລະການສາຣະພາບເຮັດໃຫ້ພວກເຮົາຕັ້ງໃຈໃສ່ພຣະຄຣິດຢ່າງຖືກຕ້ອງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຜູ້ຊ່ຽວຊານດ້ານຜລິດຜົນ ເມີລິນ ແມນນ໌ (Merlin Mann) ໄດ້ສ້າງປໂຍກຄຳເວົ້າວ່າ: "*inbox zero*" (ອີແມວ-ຂາເຂົ້າສູນວ່າງເປົ່າ) ເພື່ອເປັນການບັນລະຍາຍກ່ຽວກັບການເອົາຄວາມຄວບຄຸມຊີວິດຂອງທ່ານຄືນມາຈາກຄອມພິວເຕີ. ທິສດີຂອງທ່ານແມນນ໌ ແມ່ນວ່າ: ຖ້າຫາກທ່ານສາມາດເຮັດໃຫ້ກ່ອງຈົດໝາຍ(mailbox)ຂອງທ່ານວ່າງເປົ່າທ່ານຈະພົບການຜລິດຜົນສູງຂຶ້ນ, ຄວາມຮູ້ສຶກໝັ້ນຄົງ, ແລະລະດັບຂອງຄວາມວິຕົກກັງວົນຕ່ຳລົງ. ການຖ້ວມລົ້ນຂອງກ່ອງຈົດໝາຍຂອງທ່ານບໍ່ພຽງແຕ່ລົດການຜລິດຜົນເທົ່ານັ້ນ, ມັນເປັນການສ້າງເມກໝອກໃຫ້ແກ່ຊີວິດຂອງທ່ານດ້ວຍ.

ເພື່ອບັນລຸເຖິງ "ກ່ອງຈົດໝາຍວ່າງເປົ່າ" ບໍ່ໄດ້ໝາຍຄວາມວ່າທ່ານຕ້ອງກວດກາອີແມວຢູ່ສເມີ. ຄວາມຈິງແລ້ວ, ກົງກັນຂ້າມເປັນຄວາມຈິງຄື: ປິດປຸ່ມບອກເຕືອນ (turn off notifications) ປິດອີແມວແອັບສ່ວນໃຫຍ່ໃນທຸກມື້ເພື່ອທ່ານຈະໄດ້ມີໃຈຈົດຈໍ່ຕໍ່ສິ່ງທີ່ສຳຄັນໃນແຕ່ລະວັນຂອງຊີວິດ. ທ່ານບັນລຸເຖິງ "*ກ່ອງຈົດໝາຍວ່າງເປົ່າ*" ໃນເມື່ອທ່ານໄດ້ ທວນຄືນຄວາມສົນໃຈ ແລະເອົາການຄວບຄຸມຂອງຊີວິດຂອງທ່ານຄືນມາໃໝ່ອີກ.

ໃນຂນະທີ່ມັນບໍ່ເປັນການເປັນໄປໄດ້ທີ່ຈະບັນລຸຊີວິດທີ່ສົມບູນແບບໂດຍປາສຈາກຄວາມບາບຢູ່ໃນໂລກນີ້, ມັນເປັນການເປັນໄປໄດ້ທີ່ຈະບັນລຸ "*ສູນ-ສາຣະພາບ*" (confession zero). ຄວາມບາບທີ່ກໍ່ສ້າງຂຶ້ນມີຄວາມຮ້າຍແຮງຍິ່ງກວ່າ ການເກັບສະສົມຂອງອີແມວ, ແຕ່ຜ່ານການມີຣະບຽບວິນັຍໃນການຖືສິນອົດອາຫານ **ແລະ**ການສາຣະພາບບາບ, ພວກເຮົາສາມາດບຳລຸງຮັກສາຄວາມສຳພັນອັນເຂັ້ມແຂງກັບອົງພຣະເຈົ້າ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

## ການສຶກສາພຣະຄັມພີ

### 1. ດານີເອນ9:1-4

*[1]ດາຣິອຸດຣາຊະໂອຣົດຂອງກະສັດອາຮາຊູເອຣັສຜູ້ຊຶ່ງເປັນຄົນເຊື້ອສາຍເມເດັຽໄດ້ປົກຄອງຣາຊະອານາຈັກບາບີໂລນ.*
*[2]ໃນປີທຳອິດທີ່ພະອົງຊົງເປັນກະສັດນັ້ນຂ້າພະເຈົ້າດານີເອນໄດ້ຮໍ່າຮຽນພຣະຄັມພີແລະຄຶດເຖິງເຣື່ອງເຈັດສິບປີທີ່ນະ-*
*ຄອນເຢຣູຊາເລັມຈະຖືກທຳລາຍຕາມທີ່ພຣະຜູ້ເປັນເຈົ້າຊົງບອກເຢເຣມີຢາຜູ້ປະກາດພຣະທັມໄວ້.[3]ຂ້າພະເຈົ້າໄດ້ອ້ອນ*
*ວອນດ້ວຍໃຈຮ້ອນຮົນຕໍ່ພຣະຜູ້ເປັນເຈົ້າໄດ້ຮ້ອງຂໍຕໍ່ພຣະອົງໄດ້ອົດອາຫານໄດ້ນຸ່ງເຄື່ອງໄວ້ທຸກແລະນັ່ງໃນຂີ້ເທົ່າໄຟ.*
*[4]ຂ້າພະເຈົ້າໄດ້ອ້ອນວອນຕໍ່ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າແລະຍອມຮັບສາຣະພາບສິ່ງທີ່ຊົ່ວຊາດຂອງຂ້າພະເຈົ້າໄດ້*
*ເຮັດບາບວ່າ: "ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງຍິ່ງໃຫຍ່ແລະໜ້າຢຳເກງຊົງເຮັດຕາມຄຳໝັ້ນສັນຍາຂອງພຣະອົງຊົງ*
*ສະແດງຄວາມຮັກອັນໝັ້ນຄົງຕໍ່ຄົນທັງຫຼາຍທີ່ຈົງຮັກພັກດີຕໍ່ພຣະອົງແລະທີ່ປະຕິບັດຕາມຄຳສັ່ງຂອງພຣະອົງ."*

ຊຸມຊົນຂອງບັນດາຜູ້ເຊື່ອໃນສມັຍພຣະສັນຍາເດີມໄດ້ຖືສິນອົດອາຫານໃຫ້ເປັນພາກສ່ວນນຶ່ງໃນການປະຕິບັດເພື່ອເປັນການຊ່ວຍເຫຼືອພວກເຂົາເຈົ້າໃຫ້ມີໃຈຈົດຈໍ່ຕໍ່ອົງພຣະເຈົ້າ (ຢຣມ 36:6). ເຊັ່ນດຽວກັນ, ພວກເຂົາເຈົ້າໄດ້ຖືສິນ

ອົດອາຫານໃນເມື່ອບຸກຄົນໃດບຸກຄົນນຶ່ງໄດ້ປະເຊີນໜ້າກັບສະພາບການທີ່ຫຍຸ້ງຍາກ. ຕົວຢ່າງ, ກະສັດດາວິດໄດ້ຖືສິນອົດອາຫານໃນເມື່ອເພິ່ນໂສກເສົ້າໃນການສິ້ນພຣະຊົນຂອງກະສັດຊາອູນ ແລະໂຢນາທານໂອຣົດຂອງທ່ານ (2 ຊມອ 1:12). ການຖືສິນອົດອາຫານແມ່ນສຳຄັນກວ່າການງົດຈາກການກິນອາຫານເທົ່ານັ້ນ. ພຽງແຕ່ງົດເວັ້ນຈາກການກິນອາຫານ, ບໍ່ຈຳເປັນຕ້ອງເປັນກິຈການໃນທາງບວກຝ່າຍຈິດວິນຍານ. ເຖິງຢ່າງໃດກໍຕາມ, ສ່ວນໃຫຍ່ແລ້ວຜູ້ຂຽນພຣະສັນຍາເດີມຖືວ່າການຖືສິນອົດອາຫານເປັນແງ່ດີເພື່ອໃຫ້ບັນດາຜູ້ທີ່ເຊື່ອໃຫ້ມີໃຈຈົດຈໍ່ຕໍ່ສິ່ງທີ່ໃຫຍ່ກວ່າຄວາມຕ້ອງການຝ່າຍເນື້ອໜັງຂອງຕົນ. ດານີເອນໄດ້ຖືສິນອົດອາຫານແລະອະທິຖານເພາະສະຖານະການມັນຮ້າຍແຮງ. ລາວໄດ້ອະທິຖານແລະໄດ້ຖືສິນອົດອາຫານ, ສວມໃສ່ຜ້າກະສອບ(ຊຸດເຄື່ອງໄວ້ທຸກ), ນັ່ງຢູ່ເທິງຂີ້ເທົ່າ, ແລະອະທິຖານຕໍ່ອົງພຣະເຈົ້າ. ພາຣະຂອງເພິ່ນສຳລັບຊາວເຢຣູຊາເລັມປ່ຽນຄວາມສົນໃຈຂອງລາວຈາກອາຫານແລະຄວາມສະດວກສະບາຍໄປສູ່ສິ່ງທີ່ສຳຄັນແທ້ໆ. ພາຣະຂອງຄວາມບາບຂອງລາວແລະຄວາມບາບຂອງປະຊາກອນຂອງພຣະເຈົ້າຜັກດັນໃຫ້ລາວອະທິຖານໃນຄຳອະທິຖານສາຣະພາບຕໍ່ອົງພຣະຜູ້ເປັນເຈົ້າ. *ລາວຮູ້ສຶກໜັກໃຈຫຼາຍແຕ່ບໍ່ຫົດຫູ່ແລະມອງໂລກໃນແງ່ຮ້າຍ(ທາງລົບ).* ເຖິງແມ່ນວ່າຄວາມໜັກໜ່ວງຂອງຄວາມບາບເຮັດໃຫ້ເປັນພາຣະອັນໜັກແກ່ລາວ, ດານີເອນຍັງສາມາດມອງເຫັນພຣະສະງ່າຣາສີຂອງພຣະເຈົ້າ. ຄຳອະທິຖານຂອງລາວເລີ່ມຕົ້ນດ້ວຍການຍ້ອງຍໍສັຣເສີນແລະຄວາມໜ້າຮັກ: “*ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງຍິ່ງໃຫຍ່ແລະໜ້າຢຳເກງຊົງເຮັດຕາມຄຳໝັ້ນສັນຍາຂອງພຣະອົງຊົງສະແດງຄວາມຮັກອັນໝັ້ນຄົງຕໍ່ຄົນທັງຫຼາຍທີ່ຈິງຮັກພັກດີຕໍ່ພຣະອົງແລະທີ່ປະຕິບັດຕາມ-ຄຳສັ່ງຂອງພຣະອົງ.*” (ຂໍ້ 4) ແລະເພິ່ນ (ດານີເອນ) ມີຄວາມຮັກແລະຫ່ວງໃຍຕໍ່ປະຊາກອນຂອງພຣະເຈົ້າ. ການຖືສິນອົດອາຫານບໍ່ປະກົດວ່າເປັນເຣື່ອງປົກກະຕິໃນສມັຍປັດຈຸບັນ, ບໍ່ຄືກັນກັບຊ່ວງເວລາໃນພຣະຄັມພີສມັຍກ່ອນ. ເຖິງຢ່າງໃດກໍ່ຕາມ, *ລະບຽບວິນັຍຂອງການຖືສິນອົດອາຫານຍັງເປັນຂໍ້ປະຕິບັດທີ່ເໝາະສົມຂອງປະຊາກອນພຣະເຈົ້າ.*

| ແມ່ນຫຍັງເປັນເຫດຜົນທີ່ດີບາງຢ່າງຂອງການຖືສິນອົດອາຫານ? |
|---|

## 2. **ດານີເອນ 9:5-7**

*5 ພວກຂ້ານ້ອຍໄດ້ເຮັດບາບໄດ້ເຮັດຊົ່ວແລະເຮັດຜິດບໍ່ໄດ້ເຮັດສິ່ງທີ່ພຣະອົງຊົງສັ່ງໃຫ້ເຮັດແລະໄດ້ປະຕິເສດສິ່ງທີ່ພຣະ*
*ອົງຊົງບອກວ່າຖືກຕ້ອງ. 6 ພວກຂ້ານ້ອຍບໍ່ເຄີຍເຊື່ອຟັງພວກຜູ້ປະກາດພຣະທັມຂອງພຣະອົງຄືຜູ້ເວົ້າໃນພຣະນາມ*
*ຂອງພຣະອົງຕໍ່ພວກກະສັດພວກປົກຄອງພວກບັນພະບຸຣຸດຂອງພວກຂ້ານ້ອຍແລະຕໍ່ຊົນຊາດທັງໝົດ. 7 ຂ້າແດ່ພຣະ*
*ຜູ້ເປັນເຈົ້າພຣະອົງຊົງຊອບທັມສເມີພວກຂ້ານ້ອຍທັງປວງພ້ອມທັງປະຊາຊົນຜູ້ຢູ່ໃນແຂວງຢູດາໃນນະຄອນເຢຣູຊາ-*
*ເລັມແລະຊາວອິສຣາເອນທີ່ພຣະອົງຊົງເຮັດໃຫ້ພວກເຂົາແຕກໄປຢູ່ໃນປະເທດໃກ້ແລະໄກຍ້ອນພວກເຂົາບໍ່ເຊື່ອຟັງ*
*ພຣະອົງນັ້ນໄດ້ກະທຳສິ່ງທີ່ໜ້າອັບອາຍສເມີ.*

ເມື່ອກະສັດໂຊໂລໂມນໄດ້ມອບຖວາຍພຣະວິຫານແດ່ພຣະເຈົ້າ, ທ່ານໄດ້ອະທິຖານແລະໄດ້ທູນຂໍຕໍ່ພຣະເຈົ້າໃຫ້ຊົງອະພັຍໂທດຄວາມບາບແກ່ປະຊາຊົນຂອງພຣະອົງ, ເຖິງແມ່ນວ່າຄວາມບາບນັ້ນແມ່ນຜົນສະທ້ອນໃຫ້ພວກເຂົາຕ້ອງໄດ້ຖືກຈັບກຸມແລະເນຣະເທດ (2 ຂຄ 6:36-39). ພຣະເຈົ້າໄດ້ຊົງສະດັບຮັບຟັງແລະຕອບຄຳອະທິຖານຂອງກະສັດໂຊໂລໂມນໂດຍກ່າວວ່າ: ຖ້າຫາກວ່າ“*ປະຊາຊົນຂອງເຮົາຜູ້ທີ່ເອີ້ນອອກນາມຂອງເຮົານັ້ນຈະຖ່ອມຕົວລົງແລະອະທິຖານແລ້ວສແວງຫາເຮົາແລະຫລີກໜີຈາກທາງຊົ່ວຂອງຕົນເຮົາກໍຈະຟັງຈາກສວັນແລະຈະໃຫ້ອະພັຍແກ່ບາບຂອງພວກເຂົາແລະຈະຮັກສາແຜ່ນດິນຂອງເຂົາໃຫ້ຫາຍ*” (2 ຂຄ 7:14).

ດຽວນີ້, ນານກວ່າ 400 ປີຫຼັງຈາກນັ້ນ, ດານີເອນ ແລະປະຊາກອນຢິວຂອງເພິ່ນໄດ້ມີປະສົບການກ່ຽວກັບການ

ເນຣະເທດແລະການເປັນຊະເລີຍເສີກສົງຄາມເໝືອນຢູ່ໃນສະພາບການອະທິຖານຂອງກະສັດໂຊໂລໂມນ. ບາງທີ, ເມື່ອກຳລັງຄິດເຖິງພຣະສັນຍາຂອງພຣະເຈົ້າໃນ 2 ຂ່າວຄາວ ບົດທີ່ 7 ແລະຮູ້ວ່າພຣະເຈົ້າຊົງໄດ້ຍິນລາວ, ດານີ-ເອນໄດ້ອະທິຖານສາຣະພາບທັງສອງ: ຄືຄວາມຜິດບາບສ່ວນຕົວຂອງຕົນ <u>ແລະ</u> ຄວາມຜິດບາບຂອງຊາວອິສຣາ-ເອນທັງໝົດ. ດານີເອນບໍ່ໄດ້ຖາມກ່ຽວກັບຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກເຂົາເຈົ້າ. ຄວາມຈິງແລ້ວ, ເພິ່ນໄດ້ເຮັດກົງກັນຂ້າມຄືລາວໄດ້ຢືນຢັນຄວາມຮັກພິເສດທີ່ພຣະເຈົ້າໄດ້ຊົງມີຕໍ່ປະຊາກອນຂອງພຣະອົງ(ຂໍ້ 4). ດານີເອນບໍ່ໄດ້ຖາມວ່າເປັນຫຍັງພວກເຂົາເຈົ້າຈຶ່ງຕ້ອງຢູ່ພາຍໃຕ້ການເປັນຊະເລີຍ. ລາວໄດ້ສາຣະພາບຄວາມບາບຂອງຊຸມຊົນຊາວຢິວ, ແມ້ກະທັ້ງໃນຂະນະທີ່ພວກເຂົາເຈົ້າຕົກຢູ່ໃນສະພາບທີ່ຖືກເນຣະເທດ. <u>*ລາວໄດ້ຮວມຕົວລາວເອງຢູ່ໃນການສາຣະພາບນັ້ນ*</u>.

**ໂດຍບໍ່ມີການແກ້ຕົວ.**ບໍ່ມີສະຖານະການຫລຸດຜ່ອນ. ປະຊາກອນຂອງພຣະເຈົ້າແມ່ນ<u>ຜິດພາດຢ່າງແທ້ຈິງ</u>ແລະ<u>ເຫັນໄດ້ຢ່າງຊັດແຈ້ງ</u>. ດັ່ງທີ່ດານີເອນໄດ້ສາຣະພາບບາບຂອງພວກເຂົາເຈົ້າ, ລາວໄດ້ປະກາດຄວາມຊອບທັມຂອງພຣະເຈົ້າເຊັ່ນດຽວກັນ. ດານີເອນສາມາດແບກຫາບຈິດວິນຍານຂອງລາວແລະສາຣະພາບດ້ວຍຄວາມໂປ່ງໃສຢ່າງແທ້ຈິງເພາະລາວຮູ້ວ່າພຣະເຈົ້າຈະຊົງເຮັດຫຍັງເມື່ອລາວສາຣະພາບບາບຂອງລາວ, ແລະບາບຂອງປະຊາຊົນ. ດັ່ງທີ່ພຣະເຈົ້າໄດ້ຊົງສັນຍາໄວ້:“*ເຮົາກໍຈະຟັງຈາກສວັນແລະຈະໃຫ້ອະພັຍແກ່ບາບຂອງພວກເຂົາແລະຈະຮັກສາແຜ່ນດິນຂອງເຂົາໃຫ້ຫາຍ*” (2 ຂຄ 7:14ກ).

| ເປັນຫຍັງການສາຣະພາບບາບຈຶ່ງເປັນພາກສ່ວນທີ່ສຳຄັນຂອງຊີວິດດ້ານຈິດວິນຍານຂອງພວກເຮົາ? |
|---|

## 3. <u>ດານີເອນ 9:17-19</u>

*17ຂ້າແດ່ພຣະຜູ້ເປັນເຈົ້າຕໍ່ໄປນີ້ຂໍຊົງໂຜດຮັບຟັງຄຳອ້ອນວອນຍອມສາຣະພາບຜິດຂອງຂ້ານ້ອຍແດ່ຖ້ອນຂໍຊົງໂຜດ*
*ໃຫ້ພຣະວິຫານຂອງພຣະອົງທີ່ຖືກທຳລາຍນັ້ນກັບຄືນເປັນຄືເກົ່າເພື່ອທຸກຄົນຈະໄດ້ຮູ້ວ່າພຣະອົງຊົງເປັນພຣະເຈົ້າ.*
*18ຂ້າແດ່ພຣະເຈົ້າຂໍຊົງຮັບຟັງສຽງພວກຂ້ານ້ອຍແດ່ຖ້ອນຈົ່ງດູແລແລະທອດພຣະເນດເບິ່ງຄວາມທຸກຍາກທີ່ພວກຂ້າ-*
*ນ້ອຍປະສົບຢູ່ພ້ອມທັງຄວາມທຸກຍາກໃນນະຄອນຂອງພຣະອົງພວກຂ້ານ້ອຍອ້ອນວອນພຣະອົງຍ້ອນວ່າພຣະອົງຊົງ*
*ພຣະເມດຕາບໍ່ແມ່ນຍ້ອນພວກຂ້ານ້ອຍເປັນຄົນຊອບທັມ.19ຂ້າແດ່ພຣະຜູ້ເປັນເຈົ້າຂໍຊົງຮັບຟັງພວກຂ້ານ້ອຍແດ່ໂອ*
*ພຣະຜູ້ເປັນເຈົ້າຂໍຊົງຍົກໂທດໃຫ້ພວກຂ້ານ້ອຍແດ່ທ້ອນຂໍຊົງຮັບຟັງພວກຂ້ານ້ອຍແລ້ວຊົງຮີບກະທຳເພື່ອໃຫ້ທຸກໆຄົນ*
*ຮູ້ຈັກວ່າພຣະອົງຊົງເປັນພຣະເຈົ້າຂໍຢ່າຊົງຫຼ້າຊ້າຢູ່ເພາະວ່ານະຄອນແລະປະຊາຊົນນີ້ເປັນຂອງພຣະອົງ.”*

ໃນຂະນະທີ່ດານີເອນສລຸບການອະທິຖານຂອງເພິ່ນ, ລາວໄດ້ໃຊ້ ປໂຍກແຫ່ງພຣະພອນທີ່ໄດ້ໃຫ້ໄວ້ໃນພຣະບັນຍັດ: “*ຂໍໃຫ້ພຣະຜູ້ເປັນເຈົ້າຊົງເມດຕາປານີແລະມີພຣະທັຍອ່ອນໂຍນຕໍ່ພວກເຈົ້າ.*”(ຈບຊ 6:25). ເຖິງຢ່າງໃດກໍຕາມ, ແທນທີ່ຈະຂໍຮ້ອງໃຫ້ພຣະພັກຂອງພຣະເຈົ້າສ່ອງແສງລົງໃສ່ປະຊາກອນຂອງເພິ່ນ, ດານີເອນໄດ້ອະທິຖານຕໍ່ພຣະເຈົ້າວ່າ: “*ຂໍຊົງໂຜດໃຫ້ພຣະວິຫານຂອງພຣະອົງທີ່ຖືກທຳລາຍນັ້ນກັບຄືນເປັນຄືເກົ່າເພື່ອທຸກຄົນຈະໄດ້ຮູ້ວ່າພຣະອົງຊົງເປັນພຣະເຈົ້າ.*”(ຂໍ້ 17). ການອະທິຖານຂອງດານີເອນບໍ່ໄດ້ອີງໃສ່ຄຸນຄ່າລາຄາຂອງປະຊາກອນຂອງພຣະເຈົ້າ, <u>ແຕ່ອີງໃສ່ຄວາມເຫັນອົກເຫັນໃຈທີ່ຍິ່ງໃຫຍ່ຂອງພຣະອົງ</u>. ເພິ່ນມີຄວາມປາຖນາຢາກຍົກພຣະນາມຂອງພຣະເຈົ້າໂດຍການຍົກລະດັບເຢຣູຊາເລັມຂຶ້ນອີກ. ນັ້ນບໍ່ໄດ້ໝາຍຄວາມວ່າເພິ່ນອະທິຖານພຽງແຕ່ເພື່ອໃຫ້ອາຄານແລະກຳແພງໄດ້ຖືກສ້າງຂຶ້ນເທົ່ານັ້ນ. ຖືກຕ້ອງ, ເຢຣູຊາເລັມມີຊື່ຂອງພຣະເຈົ້າຢູ່ໃນນັ້ນ, ພຣະວິຫານໄດ້ຖືກສ້າງ ຂຶ້ນສຳລັບພຣະສະງ່າຣາສີຂອງພຣະອົງ ແລະການສ້ອມແຊມຕົວເມືອງແລະພຣະວິຫານຈະເປັນການຖວາຍພຣະກຽດແດ່ພຣະເຈົ້າ. ຄວາມຕັ້ງໃຈຂອງດານີເອນບໍ່ແມ່ນການໄດ້ສິ່ງໃດສິ່ງນຶ່ງຈາກພຣະເຈົ້າ. ຄວາມຕັ້ງໃຈຈົດຈໍ່ຂອງລາວແມ່ນມອງໜ້າໃສ່ພຣະອົງເທົ່ານັ້ນ. ດ້ວຍພາຣະໜັກໃຈຂອງເພິ່ນ, ດານີເອນໄດ້ປ່ຽນຈຸດສົນໃຈຂອງລາວຈາກອາຫານແລະຄວາມສະ

ດວກສະບາຍ. ພວກເຮົາໄດ້ເຫັນແລ້ວວ່າການອະທິຖານຂອງເພິ່ນໄດ້ຮວມເຖິງການສາຣະພາບບາບຂອງລາວ ເອງ ແລະຄວາມບາບຂອງປະຊາຊົນ ໂດຍປາສຈາກການແກ້ຕົວ. ບັດນີ້, ດ້ວຍຄວາມຕັ້ງໃຈຈົດຈໍ່ຂອງລາວເລັງໃສ່ພຣະເຈົ້າເທົ່ານັ້ນ, ເພິ່ນໄດ້ອະທິຖານເພື່ອພຣະນາມຂອງພຣະເຈົ້າຈະໄດ້ຊົງຖືກຍົກຂຶ້ນສູງ ໃນຂນະທີ່ພຣະອົງຊົງຟື້ນຟູແລະສ້ອມແຊມປະຊາກອນຂອງພຣະອົງຈາກການເປັນຊະເລີຍນັ້ນ. ການສາຣະພາບບາບ ແລະ ການຖິ້ມໃຈເກົ່າເອົາໃຈໃໝ່ແມ່ນເປັນການປະຕິບັດທີ່ຖືກຕ້ອງ. ການກະທຳດ້ວຍຄວາມຖ່ອມໃຈຖ່ອມກາຍນີ້ ເຮັດໃຫ້ການຟື້ນຟູແລະສ້ອມແຊມຄວາມສັມພັນຂອງພວກເຮົາເປັນໄປໄດ້. ເຖິງຢ່າງໃດກໍ່ຕາມ, ຖ້າພວກເຮົາ**ບໍ່ຍອມ**ສາຣະພາບບາບຂອງພວກເຮົາ, ພວກເຮົາຈະບໍ່ສາມາດມອງເຫັນຢ່າງແຈ່ມແຈ້ງ; ຈິດໃຈຂອງພວກເຮົາຈະຍັງຢູ່ກັບຄວາມບາບຂອງພວກເຮົາ. ເພາະວ່າພວກເຮົາມີຄວາມຜິດກ່ຽວກັບຄວາມບາບຂອງພວກເຮົາ, ພວກເຮົາຈຶ່ງບໍ່ສາມາດເອົາໃຈໃສ່ກັບພຣະເຈົ້າ. ແຕ່ວ່າເມື່ອໃດພວກເຮົາຍອມສາຣະພາບບາບຂອງພວກເຮົາ, ເມື່ອນັ້ນພຣະເຈົ້າຊົງໃຫ້ອະພັຍ, ເມກໝອກ ຖືກຍົກຫາຍໄປ; **ແລ້ວພວກເຮົາກໍສາມາດຕັ້ງໃຈຈົດຈໍ່ໃສ່ພຣະອົງ.**

## ນຳໃຊ້ໃນຊີວິດ:

ທ່ານຈະເຮັດຫຍັງອາທິດນີ້ ເພື່ອຈະເປັນການຈົດຈໍ່ຕໍ່ພຣະຄຣິດ? ຈົ່ງໃຊ້ນຶ່ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້:

- **ຈົ່ງສາຣະພາບບາບ.** ຈົ່ງໃຊ້ເວລາສາຣະພາບບາບທີ່ທ່ານຍັງບໍ່ໄດ້ນຳສເນີພຣະເຈົ້າເທື່ອ, ການສາຣະພາບບາບແມ່ນ "*ການເຫັນດີກັບພຣະເຈົ້າ*" ວ່າການກະທຳຂອງທ່ານນັ້ນເປັນຄວາມບາບ. ຈົ່ງຢ່າຫາທາງແກ້ຕົວ. ຈົ່ງສາຣະພາບ-ແລະຂອບພຣະຄຸນພຣະເຈົ້າສຳລັບການຊົງໃຫ້ອະພັຍຂອງພຣະອົງແກ່ທ່ານ.
- **ຈົ່ງອົດຫິວຈາກເທຄໂນໂລຍີ.** ຈົ່ງເລືອກເອົາບາງສິ່ງທີ່ທ່ານເຮັດແຕ່ລະວັນ, ເປັນຕົ້ນ: ເບິ່ງທີວີ, ຫຼືຕິດຕໍ່ສື່ສັງຄົມ, ແລະພຍາຍາມຕັ້ງໃຈອົດກັ້ນຈາກສິ່ງເຫຼົ່ານັ້ນພາຍໃນລະຍະນຶ່ງອາທິດຕໍ່ໄປນີ້. ໃຊ້ເວລານັ້ນອະທິຖານໂດຍບໍ່ມີການລົບກວນ ແລະມີໃຈຈົດຈໍ່ຕໍ່ອົງພຣະຄຣິດ.
- **ຈົ່ງອົດອາຫານ.** ຖ້າທ່ານບໍ່ມີບັນຫາເຣື່ອງສຸຂພາບ, ຈົ່ງໃຊ້ເວລາທ້າຍອາທິດໜ້າປະຕິບັດການຖືສິນອົດອາຫານ. ຈົ່ງຮ່ວມເວລາກັບບັນດາຄົນອື່ນໆທີ່ໄດ້ສຶກສາພຣະຄັມພີບົດນີ້ໃນການອະທິຖານເພື່ອການປຸກຈິດວິນຍານໃນປະເທດຊາດຂອງພວກເຮົາ.

"*ສູນ-ສາຣະພາບ*" (***confession zero***) ແມ່ນເປົ້າໝາຍຂອງພວກເຮົາ. ພວກເຮົາບໍ່ຕ້ອງຍອມໃຫ້ຄວາມບາບທຸກຢ່າງຫຼຸດໄປລີ້ຊ່ອນໃນຫົວໃຈຂອງພວກເຮົາ. ກົງກັນຂ້າມ, ພວກເຮົາສົມຄວນໝັ່ນຄົ້ນຫາຄວາມບາບທີ່ລີ້ຊ່ອນຢູ່ໃນຫົວໃຈຂອງພວກເຮົາ, ສາຣະພາບບາບນັ້ນຕໍ່ພຣະເຈົ້າ, ຮັບເອົາການຊົງໃຫ້ອະພັຍ, ແລະສັມຜັດກັບຄວາມໝັ້ນຄົງແລະສັນຕິສຸກທີ່ມາຈາກການສາມັກຄີທັມກັບອົງພຣະເຈົ້າ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ http://lsbf.us/ ໂດຍ SSK**